# ເອເຊດຣາເຊ (ເອຊະຣາ)

| | |
|---|---|
| ໃຈຄວາມສຳຄັນ | ການສ້າງຂຶ້ນໃໝ່ |
| ຂໍ້ຄວາມສຳຄັນ | ບົດ ໔:໓; ໕:໒ |
| ຈຳນວນບົດ | ໑໐ ບົດ |
| ເລື່ອງເກີດຂຶ້ນໃນປີ | ໕໓໖ ຈົນເຖິງ ໔໕໗ ກ່ອນ ຄ.ສ. |
| ໜັງສືທີ່ຂຽນໃນຄາວດຽວກັນ | ອາກເກ, ຊາກາລີ |
| ຜູ້ຂຽນ | ທ່ານເອເຊດຣາເຊ |

## ໑. ຄຳນຳ

ໜັງສືເອເຊດຣາເຊກັບໜັງສືເນເຫມີ ເປັນໜັງສືທີ່ເລົ່າການກັບຄືນມາຈາກເມືອງບາບີໂລນ ແຕ່ກ່ອນໜັງສືທັງສອງເຫຼັ້ມນີ້ຢູ່ໃນເຫຼັ້ມດຽວກັນ ແລະເປັນໜັງສືທີ່ຂຽນເລົ່າເລື່ອງຕໍ່ຈາກໜັງສືຂ່າວຄາວ ຜູ້ຂຽນໜັງສືນີ້ຄືທ່ານເອເຊດຣາເຊ ເພິ່ນເປັນຜູ້ຊຳນານແລະສລຽວສລາດໃນການປະຕິບັດພຣະເຈົ້າ (ກຸ:໗,໑໐) ແລະເປັນຜູ້ມີອຳນາດໃນທາງສາສນາ ຄືມີອຳນາດໃນກິຈການຂອງພວກເລວີແລະການສ້າງວິຫານຂອງພວກຢູດາ

ອັນນຶ່ງເຫດການຕ່າງໆ ທີ່ເລົ່າໃນໜັງສືນີ້ເປັນເລື່ອງທີ່ເກີດຂຶ້ນເຖິງ ໗໙ ປີ ຄືນັບແຕ່ພວກຢູດາຊຸດແຣກກັບຄືນມາຕາມຄຳສັ່ງຂອງກະສັດຊີຣີເຊໃນປີກ່ອນ ຄ.ສ. ໕໓໖ ຊຶ່ງໃນຣະຫວ່າງນີ້ເປັນຄາວສໄມຂອງພວກຜູ້ທຳນວາຍທັງສອງຄືອາກເກ ແລະ ຊາກາລີ

## ໒. ວ່າດ້ວຍບົດສຳຄັນ

໑. ຜູ້ທີ່ເຮັດການຂອງພຣະເຈົ້າຈະຕ້ອງມີສັດຕູມາຕໍ່ສູ້ ບົດ ໔

໔. ພວກຂອງພຣະເຈົ້າຕ້ອງເປັນຜູ້ບໍຣິສຸດ ແລະ ບໍ່ແຕ່ງງານກັບຄົນທີ່ບໍ່ເຊື່ອ ບົດ ໙–໑໐

໓. ໃນການທີ່ພວກຢູດາສ້າງວິຫານ ແລະແທ່ນບູຊາກໍເປັນສຳຄັນສຳລັບພວກເຂົາ ສ່ວນພວກເຮົາກໍເໝືອນກັນ ຕ້ອງຮ່ວມຈິດຮ່ວມໃຈໃນໄມ້ກາງແຂນ ຂອງພຣະອົງກ່ອນຈະເຮັດການສຳລັບພຣະເຈົ້າ

## ໔. ການແບ່ງເປັນພາກ

ພາກທີ ໑ ພວກອິສຣາເອັນຊຸດແຣກກັບຄືນມາ ບົດ ໑–໖

ກ. ຂໍ້ປະກາດຂອງກະສັດຊີຣິເຊ ບົດ ໑

ຂ. ທ່ານໄຊໂຣໄບເບນ (ສະໂຣບາເບັນ) ນຳພວກຢູດາມາຈາກເມືອງບາບີໂລນ (ບົດ ໒)

ຄ. ການສ້າງວິຫານ ແລະ ການຂັດຂວາງ ຂອງ ພວກ ສັດຕູ ບົດ ໓–໔

ງ. ຂໍ້ປະກາດຂອງກະສັດດາຣິອຸເຊ ບົດ ໖:໑–໑໒

ຈ. ການກໍ່ສ້າງໄດ້ສຳເຣັດ ບົດ ໖:໑໓–໒໒

ພາກທີ ໒ ພວກອິສຣາເອັນຊຸດທີ່ສອງກັບຄືນມາ ບົດ ໗–໑໐

ກ. ທ່ານເອເຊດຣາເຊນຳພວກຢູດາມາຈາກເມືອງ
ບາບີໂລນ ບົດ ໗–໘

ຂ. ຄຳອ້ອນວອນຂອງທ່ານເອເຊດຣາເຊ ບົດ ໙

ຄ. ປະຊາຊົນໄດ້ຍອມຜິດ ບົດ ໑໐